# ຈົດໝາຍບັນທຶກ

ຂອງ

ກະຊວງການຕ່າງປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການທີ່ພວກປະຕິການຂວາຈັດ

ໃນວົງການກຳອຳນາດໄທບຽດຍຶດເອົາ

ບ້ານໃໝ່, ບ້ານກາງ ແລະ ບ້ານສະຫວ່າງ

ຂອງລາວ

ເດືອນ ກັນຍາ 1984

# ຈົດໝາຍບັນທຶກ

ຂອງ

ກະຊວງການຕ່າງປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການທີ່ພວກປະຕິການຂວາຈັດ

ໃນວົງການກຳອຳນາດໄທບຸກຍຶດເອົາ

ບ້ານໃໝ່, ບ້ານກາງ ແລະບ້ານສະຫວ່າງ

ຂອງລາວ

ເດືອນ ກັນຍາ 1984

# ຈົດໝາຍບັນທຶກ

ຂອງກະຊວງການຕ່າງປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບ ການທີ່ ພວກປະຕິການຂວາຈັດໃນວົງການ ກຳອຳ ນາດ ໄທບຸກຍຶດເອົາບ້ານໃໝ່, ບ້ານກາງແລະບ້ານ ສະຫວ່າງຂອງລາວ.

* ວັນທີ 6 ມິຖຸນາ ປີ 1984, ພວກ ປະຕິ ການຂວາຈັດໃນວົງການກຳອຳນາດໄທ ໄດ້ລະດົມ ກຳລັງທະຫານເກືອບ 2.000 ຄົນ, ພາຍ ໃຕ້ ການຊຸມກັນຈາກປືນໃຫຍ່, ລົດຖັງເກາະແລະເຮືອ ບິນສອດແນມບຸກໂຈມຕີບຸກຍຶດເອົາສາມໝູ່ບ້ານ ຄື: ບ້ານໃໝ່, ບ້ານກາງ ແລະ ບ້ານສະຫວ່າງ ຊຶ່ງຂຶ້ນກັບຕາແສງ ບ້ານໃໝ່, ເມືອງປາກລາຍ , ແຂວງໄຊຍະບູລີຂອງສາທາລະນະລັດປະຊາທິ ປະ ໄຕປະຊາຊົນລາວ.

ພວກປະຕິການຂວາຈັດໃນວົງການກຳອຳນາດ ໄທເສກສັນປັ້ນເລື່ອງຂຶ້ນວ່າ ສາມໝູ່ບ້ານນັ້ນຕັ້ງຢູ່

ໃນດິນແດນຂອງໄທ. ຫລັງຈາກຍຶດເອົາ ສາມຫມູ່ບ້ານຂອງລາວນັ້ນແລ້ວ ພວກເຂົາຈ້າພັດຊຸນ ຊູ້ຮວ ປັບປຸງທີ່ຕັ້ງຂອງພວກເຂົາ ໂດຍແນໃສ່ ແກຍາວການຍຶດຄອງສາມຫມູ່ບ້ານ ແລະ ປະຕິບັດ ເຈດຕະນາຮຸກຮານບຸກຍຶດເອົາດິນແດນລາວແຫ່ງໃຫມອີກ; ພວກເຂົາຍັງໃຊ້ການເຈລະຈາ ເພື່ອປິດບັງເລ່ກົນອັນມືດມົນຂອງພວກເຂົາດັ່ງກ່າວນັ້ນ.

ສະພາບຄວາມເປັນຈິງ ກ່ຽວກັບສາມຫມູ່ບ້ານກົນອຸບາຍລາຍຫລ່ຽມຂອງພວກປະຕິການ ຂວາຈັດໄທ ແລະ ຫລັກຫມັ້ນຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວດີແນວໃດນັ້ນ, ຈົດຫມາຍບັບທີ່ຈະໃຫ້ຄວາມກະຈ່າງແຈ້ງດັ່ງຕໍ່ໄປນີ້:

# ພາກທີ I

ບ້ານໃໝ່, ບ້ານກາງ ແລະ ບ້ານສະຫວາງ ແມ່ນຂຶ້ນກັບອຳນາດອະທິປະໄຕຂອງລາວ ເຊິ່ງປະຫວັດສາດ, ການປົກຄອງ, ແຜນທີ່ ແລະ ຫລັກ ໝາຍເຂດແດນ ໄດ້ຢືນຢັນຢ່າງຈະແຈ້ງ.

1- <u>ທາງດ້ານປະຫວັດສາດ, ການປົກ ຄອງ ຂອງສາມໝູ່ບ້ານ:</u>

ສາມໝູ່ບ້ານດັ່ງກ່າວຂ້າງເທິງນັ້ນ ຕັ້ງ ຢູ່ໃນເຂດທີ່ເອີ້ນວາ ປາກດານ ໂດຍພະຍາ ຈິມພູ (ຄົນລາວ) ເປັນຜູ້ສ້າງຕັ້ງຂຶ້ນ ກ່ອນນີ້ຮ້ອຍກວ່າປີ

ຕໍ່ມາໝູ່ບ້ານດັ່ງກ່າວນັ້ນໄດ້ປ່ຽນຊື່ຈາກ ຄຳວ່າ ປາກຄານ ມາເປັນ ບ້ານໃໝ ໂດຍແສນຫລວງວິເສດ (ຄົນລາວ) ເປັນຜູ້ຕັ້ງຊື່ໃຫ້. ເມື່ອ ພົນລະເມືອງຂອງບ້ານນີ້ໄດ້ຂະຫຍາຍຕົວຂຶ້ນຕື່ມ,ຊາວບ້ານຈຳນວນໜຶ່ງ ຈິ່ງໄດ້ແຍກອອກໄປຕັ້ງບ້ານໜຶ່ງຕື່ມອີກ ໂດຍໃຫ້ຊື່ວ່າ ບ້ານໂພນເປືອຍເປົາ ແລະ ຕໍ່ມາກໍໄດ້ປ່ຽນຊື່ວ່າ ເປັນບ້ານກາງ ຈົນເທົ່າທຸກວັນນີ້, ເຊິ່ງມີອາຍຸເກືອບແປດສິບປີມາແລ້ວ. ມາເຖິງປີ 1945 ປະຊາຊົນຈາກບ້ານໃໝ ແລະ ບ້ານກາງ ໄດ້ຂະຫຍາຍອອກໄປຕັ້ງຖິ່ນຖານຢູ່ບ່ອນໃໝ່ຕື່ມອີກ ໂດຍໃຫ້ຊື່ວ່າ ບ້ານສະຫວາງ.

ໃນສະໄໝຝະລັ່ງປົກຄອງ, ສາມໝູ່ບ້ານ ນີ້ຂຶ້ນກັບຕາແສງເມືອງທົ່ງ ເຊິ່ງຕໍ່ມາປ່ຽນເປັນ ຕາແສງບ້ານແດດ, ເມືອງປາກລາຍ, ແຂວງໄຊຍະບູລີ. ພາຍໃຕ້ລະບອບສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ເຂດນີ້ໄດ້ແບ່ງເປັນສາມ ຕາແສງຄື: ຕາແສງບ້ານໃໝ່, ຕາແສງບ້ານແດດ ແລະ ຕາແສງ ບ້ານໃຫຍ່. ສະເພາະ ຕາແສງ

ບ້ານໃຫມ່ ລວມມີ 5 ບ້ານຄື: ບ້ານໃຫມ່, ບ້ານກາງ, ບ້ານສະຫວາງ, ບ້ານແດນ ແລະ ບ້ານນາຝາຍ.

ປະຊາຊົນສາມຫມູ່ບ້ານນີ້ລ້ວນແຕ່ເປັນຄົນລາວ ໃຊ້ພາສາ ແລະ ຫນັງສືລາວ, ຖືຮີດຄອງປະເພນີລາວຂຶ້ນສຳມະໂນຄົວ ແລະ ເສຍສ່ວຍໃນປາງຝະລັ່ງປົກຄອງ ແລະ ຢູ່ພາຍໃຕ້ການປົກຄອງຂອງອຳນາດການປົກຄອງລາວຕໍ່ໆມາ ຈົນຮອດນີ້ ທະຫານໄທມາຢຶດຄອງເອົາ.

2- <u>ກ່ຽວກັບເສັ້ນຊາຍແດນ, ແຜນທີ່, ຫລັກຫມາຍເຂດແດນ:</u>

ເສັ້ນຊາຍແດນລະຫວ່າງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ກັບລາຊະອານາຈັກໄທ ເປັນເສັ້ນຊາຍແດນປະຫວັດສາດທີ່ໄດ້ກຳນົດ ຕາມບັນດາສົນທິສັນຍາ ແລະ ເອກະສານ ທາງ ດ້ານກົດຫມາຍທີ່ໄດ້ລົງນາມ ລະຫວ່າງລັດຖະບານ ຝະລັ່ງ ກັບ ລັດຖະບານ ສະຫຍາມ (ໄທ) ໃນເມື່ອກ່ອນ:

- <u>ສົນທິສັນຍາ ລະຫວ່າງຝະລັ່ງ-ສະຫຍາມທີ່ ໄດ້ເຊັນກັນ ວັນທີ 13/2/1904</u>:

ໄດ້ລະບຸໄວ້ຢ່າງຈະແຈ້ງໃນມາດຕາ 4 ວ່າ: "ລັດຖະບານສະຫຍາມຍົກເລີກທຸກໆອະພິສິດເໜືອ ດິນແດນຂອງຫລວງພະບາງ ທີ່ຢູ່ເບື້ອງຂວາແມ່ ນ້ຳຂອງ" (ປັດຈຸບັນແມ່ນແຂວງໄຊຍະບູລີ).

- <u>ສົນທິສັນຍາລະຫວ່າງຝະລັ່ງ-ສະຫຍາມ ທີ່ ໄດ້ເຊັນກັນ ວັນທີ 23/3/1907</u>:

ພາຍຫລັງທີ່ໄດ້ປັກຫລັກໝາຍເສັ້ນຊາຍແດນ ຕາມພູມປະເທດຕົວຈິງແລ້ວ ທັງສອງຝ່າຍໄດ້ພ້ອມ ກັນປະຕິບັດ ເພື່ອຮັບປະກັນວິທີການແກ້ໄຂຂັ້ນສຸດທ້າຍໃຫ້ແກ່ທຸກໆບັນຫາທີ່ກ່ຽວຂ້ອງເຖິງເສັ້ນ ຊາຍແດນລະຫວ່າງອິນດູຈີນ ແລະ ສະຫຍາມ, ໃນນັ້ນ ມີເສັ້ນຊາຍແດນຂອງຫລວງພະບາງ (ປັດຈຸບັນແມ່ນແຂວງໄຊຍະບູລີຂອງລາວ) ກັບແຂວງ ນານ(ປັດຈຸບັນແມ່ນແຂວງອຸຕະລະດິດຂອງໄທ).

- ປີ 1941 ລັດຖະບານໄທໄດ້ອີງໃສ່ ພວກຟາຊິດຍີ່ປຸ່ນ ໜີບຮັດບັງຄັບໃຫ້ລັດຖະບານວີຊີຂອງ

ຝະລັ່ງມອບດິນແດນຂອງແຂວງ ຫລວງພະບາງ ທີ່ຢູ່ເບື້ອງຂວາແມ່ນ້ຳຂອງ (ປັດຈຸບັນແມ່ນແຂວງໄຊຍະບູລີ) ໃຫ້ໄທຄຸ້ມຄອງ (ຕາມສົນທິສັນຍາສັນ ຕິພາບລະຫວາງຝະລັ່ງ-ໄທ ໃນວັນທີ 9/5/1941 ທີ່ໂຕກຽວ). ຫລັງຈາກສົງຄາມໂລກຄັ້ງທີ 2 ສິ້ນສຸດລົງ, ກອງປະຊຸມປະເທດສຳພັນທະມິດທີ່ ວໍຊິງຕັນ ໄດ້ຕົກລົງໃຫ້ລັດຖະບານຝະລັ່ງກັບລັດຖະບານສະຫຍາມເຊັນສັນຍາ ວັນທີ 17/11/1946 ໃຫ້ຍົກເລີກສົນທິສັນຍາທີ່ໄດ້ລົງນາມທີ່ໂຕກຽວ ແລະໃຫ້ຟື້ນຟູຊາຍແດນ ລາວ-ໄທ ກັບຄືນສູ່ສະພາບເດີມ ກອນເວລາເຊັນສົນທິສັນຍາ ໂຕກຽວ.

ບັນດາແຜນທີ່ອິນດູຈີນ ທີ່ພິມໂດຍກົມ ພູມສາດອິນດູຈີນຂອງຝະລັ່ງກອນປີ 1954 ນັບທັງ ແຜນທີ່ຂອງ "ຄະນະກຳມະການກຳນົດແບ່ງເຂດແດນລະຫວາງອິນດູຈີນກັບສະຫຍາມ" ກຽວກັບບໍລິ ເວນປາກລາຍ (ແຜນແຜນທີ່ 1459-ອາ) ມາດຕາສວນ 1/200.000 ລ້ວນແຕໄດ້ຢືນຢັນຢາງ ຈະແຈ້ງວາ ບ້ານໃຫມຕັ້ງຢູເລິກເຂົ້າໃນດິນແດນຂອງ

ລາວ.

ເສັ້ນຊາຍແດນ ລາວ-ໄທ ຫ່າງຈາກ ບ້ານໃຫ່ມປະມານ 8 ກິໂລແມັດ ໄປທາງທິດ ຕາເວັນຕົກ ແລະ ປະມານ 2 ກິໂລແມັດໄປທາງທິດ ໃຕ້ຂອງບ້ານໃຫມ, ບ້ານສະຫວາງ ຕັ້ງຢູ່ທາງທິດຕາເວັນຕົກຂອງບ້ານໃຫ່ມປະມານ 4 ກິໂລແມັດແລະຫ່າງຈາກເສັ້ນຊາຍແດນ ລາວ-ໄທ ປະມານ 4 ກິໂລແມັດ. ບ້ານກາງຕັ້ງຢູ່ລະຫວ່າງກາງ ຂອງບ້ານສະຫວາງ ແລະ ບ້ານໃຫ່ມ.

ການແບ່ງເຂດແດນຢູ່ບໍລິເວນປາກລາຍ ແມ່ນປະຕິບັດຕາມຫລັກການສັນພູປັນນ້ຳ ຄື: ເບື້ອງນ້ຳໄຫລສູ່ອາງແມ່ນ້ຳຂອງເປັນດິນແດນຂອງລາວ , ເບື້ອງນ້ຳໄຫລສູ່ອາງແມ່ນ້ຳ (ເຈົ້າພະຍາ) ແມ່ນດິນແດນຂອງໄທ. ສາມຫມູ່ບ້ານ: ບ້ານໃຫ່ມ , ບ້ານກາງ, ບ້ານສະຫວາງ ຕັ້ງຢູ່ບໍລິເວນ ສາຂາຂອງນ້ຳປຸ່ນຕອນປ່າຍ ອັນເປັນຫມູ່ບ້ານຕັ້ງຢູ່ເບື້ອງນ້ຳໄຫລສູ່ອາງແມ່ນ້ຳຂອງເປັນດິນແດນຂອງລາວ.

ເຂດແດນ ລະຫວ່າງສອງປະເທດໃນບໍລິເວນ

ນມຫລັກໝາຍ 3 ຫລັກ ເຊິ່ງໄດ້ຝັງໂດຍ ເຈົ້າໜ້າທີ່ຂອງສະຫຍາມ (ໄທ) ແລະ ຝະລັ່ງ:

- ຫລັກໜຶ່ງ ຝັງຢູ່ສົບພູຮົງ ເຊິ່ງໄດ້ຮັບຮູ້ກັນວ່າ ຈາກສັນປັນນ້ຳພູຮົງ ລົງສູ່ເບື້ອງອາງນ້ຳຂອງແມ່ນດິນແດນຂອງລາວ.

- ຫລັກໜຶ່ງ ຝັງຢູ່ກິ່ວນົກແຊວ ເຊິ່ງໄດ້ຮັບຮູ້ກັນວ່າ ຈາກສັນປັນນ້ຳພູກິ່ວນົກແຊວລົງສູ່ເບື້ອງອາງແມ່ນ້ຳຂອງ ແມ່ນດິນແດນຂອງລາວ.

- ຫລັກໜຶ່ງ ຝັງຢູ່ສົບພູຫລັກໝື່ນ ເຊິ່ງຮັບຮູ້ກັນວ່າ ຈາກສົບພູຫລັກໝື່ນລົງສູ່ເບື້ອງອາງແມ່ນ້ຳຂອງແມ່ນດິນແດນຂອງລາວ.

ເພື່ອເປັນການແກ້ຕົວໃຫ້ແກ່ການກະທຳ ອັນເປັນການບຸກຍຶດຂອງພວກປະຕິການຂວາຈັດ ໃນວົງການກຳອຳນາດໄທ, ຝ່າຍໄທ ໄດ້ປະກາດແຜນທີ່ອັນໜຶ່ງເຊິ່ງເຂົາເປັນຜູ້ແຕ້ມຂຶ້ນເອງ ແລະ ໄດ້ສົ່ງແຜນທີ່ດັ່ງກ່າວນັ້ນຕິດໄປພ້ອມກັບ ຈົດໝາຍທາງການ ເລກທີ 95/2527 ລົງວັນທີ 21/6/1984 ໃຫ້ເລຂາທິການໃຫຍ່ສະຫະປະຊາຊາດ .

ແຜນທີ່ນັ້ນໄດ້ຂີດເສັ້ນຊາຍແດນຜ່າກາງບ້ານໃໝ່, ກວມເອົາບ້ານກາງ ແລະ ບ້ານສະຫວ່າງເຂົ້າໃນດິນໄທ, ແຜນທີ່ ທີ່ຝ່າຍໄທແຕ້ມຂຶ້ນແມ່ນອີງ ຕາມແຜນທີ່ ທີ່ພິມໂດຍກອງທັບບົກອາເມລິກາເຊິ່ງແຜນທີ່ດັ່ງກ່າວນັ້ນກໍໄດ້ບັນທຶກຢ່າງຈະແຈ້ງວ່າ: " ເສັ້ນແບ່ງເຂດແດນປົກຄອງພາຍໃນແມ່ນບໍ່ຖືກຕ້ອງ ຄັກແນ່ ແລະ ບໍ່ສົມບູນ. ເສັ້ນຊາຍແດນລະຫວ່າງຊາດທີ່ແຕ້ມຢູ່ໃນແຜນທີ່ນີ້ ຖືເປັນທາງການບໍ່ໄດ້".

ບັນດາແຜນທີ່ ທີ່ຝ່າຍໄທ ໄດ້ເອົາມາເປັນ ຂໍ້ອ້າງນັ້ນ ມັນເອົາເປັນຫຼັກຖານບໍ່ໄດ້, ທັງບໍ່ມີຄຸນຄ່າທາງດ້ານກົດໝາຍຢ່າງໃດໝົດ ແລະ ມັນຜິດກັບສະພາບຕົວຈິງຂອງເສັ້ນຊາຍແດນ ລາວ- ໄທທີ່ໄດ້ກຳນົດ ແລະ ປັກຫຼັກໝາຍໄວ້.

ສິ່ງທີ່ເປີດແປນກວ່ານັ້ນອີກ, ແມ່ນຫຼັງຈາກນັ້ນທີ່ພວກເຂົາບຸກຍຶດເອົາສາມໝູ່ບ້ານຂອງລາວນັ້ນແລ້ວ, ທະຫານໄທໄດ້ຖອນຫຼັກໝາຍເຂດແດນຢູ່ພູຮົ້ງ ແລະ ຫຼັກໝາຍເຂດແດນຢູ່ກິວນົກແຊວໄປບອນອື່ນ. (ວັນທີ 7/6/1984 ໂທລະພາບຂອງ

7 ໄທໄດ້ອອກຂ່າວ ແລະ ຮູບທະຫານໄທ ກຳລັງຫາມຍ້າຍຫລັກໝາຍດັ່ງກ່າວນັ້ນ).

ໜັງສືພິມ ເດີເນເຊິນ ຂອງໄທ ສະບັບວັນທີ 21/6/84 ກໍໄດ້ເພີຍອອກວ່າ: ບັນດານັກ ຊ່ຽວຊານທາງດ້ານກົດໝາຍຂອງໄທໄດ້ປະຊຸມກັນຫຼາຍເທື່ອໃນການພະຍາຍາມຊອກຫາຫລັກຖານ ທາງດ້ານກົດໝາຍ ເພື່ອພິສູດໃຫ້ແກ່ຄຳເລັ້ງຫວງຂອງໄທ ຕໍ່ສາມໝູ່ບ້ານຂອງລາວດັ່ງກ່າວນີ້.

ທ່ານ ທະວັດ ນິກກຣະພົງ ເຈົ້າແຂວງ ອຸຕະລະດິດ ໄດ້ເວົ້າວ່າ: ສາມໝູ່ບ້ານນີ້ເປັນ ສາມໝູ່ບ້ານໃໝ່ຂອງໄທ, ທາງການປົກຄອງແຂວງຈະສົ່ງພະນັກງານດຳເນີນການສຳຫລວດພົນ ລະເມືອງ ແລະ ອອກໜັງສືປະຈຳຕົວໃຫ້ເຂົາ(ເດີ-ເນເຊິນ ຂອງໄທ ສະບັບ ວັນທີ 18/6/1984)

ນາຍພົນ ອາທິດ ກຳລັງເອກ ເອງກໍໄດ້ເວົ້າຢ່າງຄຸມເຄືອວ່າ: ບ້ານໃໝ່ ກຳນົດໄດ້ຍາກເພາະຕັ້ງຢູ່ຕິດກັບຊາຍແດນ. (ໜັງສືພິມບາງກອກໂປດ ສະບັບວັນທີ 16/6/1984 ແລະ ໜັງສືພິມ ເດີ

ເນເຊີນ ຂອງໄທ ສະບັບວັນທີ 18/6/1984).

ໃນເວລາດຽວກັນນັ້ນ, ບຸກຄົນສຳຄັນຈຳນວນ ໜຶ່ງ ໃນວົງການ ການເມືອງຂອງໄທກໍບໍ່ ຢືນຢັນ ໄດ້ວ່າ: ສາມໝູ່ບ້ານດັ່ງກ່າວນັ້ນເປັນຂອງ ໄທ, ເປັນຕົ້ນ ທ່ານພົນເອກ ທຽງສັກ ຈະມະນັນ, ອະ ດີດນາຍົກລັດຖະມົນຕີ, ປະທານຄະນະກຳມະການ ວິເທດສຳພັນຂອງສະພາຜູ້ແທນລາຊະດອນ ໄທ , ຫລັງຈາກໄດ້ໃຫ້ເຈົ້າໜ້າທີ່ຂັ້ນສູງຂອງ ກະຊວງ ພາຍໃນ, ກະຊວງການຕ່າງປະເທດໄປຊີ້ແຈງບັນ ຫາຂອງສາມໝູ່ບ້ານດັ່ງກ່າວນັ້ນຕໍ່ຄະນະ ກຳ ມະ ການວິເທດສຳພັນຂອງສະພາຜູ້ແທນລາຊະດອນ ເມື່ອວັນທີ 29/6/1984 ແລ້ວ, ທ່ານໄດ້ໃຫ້ສຳ ພາດຕໍ່ນັກຂ່າວວ່າ: "ບັນຫານີ້ ເປັນຂອງໃຜຍັງບໍ່ ແຈ້ງ" (ໜັງສືພິມໄທຣັດ ສະບັບວັນທີ 29/6/ 1984), ທ່ານໄພທູນ ເດືອແກ້ວ, ເລຂາຄະນະ ກຳມະການວິເທດສຳພັນຂອງສະພາຜູ້ແທນ ລາຊະ ດອນໄທ ກໍໄດ້ກ່າວຕໍ່ນັກຂ່າວວ່າ: "ຄະນະກຳມະ ການຍັງບໍ່ທັນຮູ້ແຈ້ງວ່າ ບ້ານໃໝ່, ບ້ານ ກາງ

ແລະ ບ້ານສະຫວ່າງແມ່ນຕັ້ງຢູ່ໃນດິນແດນໄທ ຫລື ຢູ່ໃນດິນແດນລາວ" (ໜັງສືພິມ ເດີເນເຊີນຂອງໄທ ສະບັບວັນທີ 19/6/1984).

ວາລະສານແຫລງຂາວລາຍສັບປະດາຂອງໄທ ສະບັບທີ 45 ອອກວັນທີ 1-7 ກໍລະກົດ ປີ1984 ພາຍໃຕ້ຫົວຂໍ້ທີ່ວ່າ: "ສິ່ງທີ່ໄດ້ພົບ ແລະ ໄດ້ ສຳພັດ" ຂຽນວ່າ: "ຈາກຄຳບອກເລົ່າຂອງ ເຈົ້າໜ້າທີ່ໄທນັ້ນ ຕັ້ງແຕ່ໃດໆມາ ທາງໄທເອງ ກໍຄິດວ່າ ສາມໝູ່ບ້ານດັ່ງກ່າວນັ້ນເປັນຂອງລາວ, ດັ່ງນັ້ນຈຶ່ງບໍ່ມີເຈົ້າໜ້າທີ່ຝ່າຍໄທຈັກຄົນທີ່ເຄີຍເຂົ້າໄປໃນໝູ່ບ້ານນັ້ນ. ການປົກຄອງທັງໝົດຢູ່ ພາຍໃຕ້ການປົກຄອງຂອງສາທາລະນະລັດປະຊາທິປະ ໄຕປະຊາຊົນລາວ ທັງຝ່າຍປົກຄອງ ແລະ ກອງ ກຳລັງທະຫານ ກໍລ້ວນແຕ່ເປັນຄົນຂອງຝ່າຍລາວ,ພາສາທາງການທີ່ໃຊ້ກໍເປັນພາສາລາວ ເປັນແນວ ນີ້ມາຫລາຍຊົ່ວຄົນແລ້ວ..." .

ບ້ານໃໝ່, ບ້ານກາງ ແລະ ບ້ານສະຫວ່າງ ແມ່ນຂອງສາທາລະນະລັດ ປະຊາທິປະໄຕ ປະຊາ

ຊົນລາວ ເຊື່ງຫ່າງດ້ານປະຫວັດສາດ, ດ້ານ ກົດໝາຍແລະໃນຕົວຈິງໄດ້ຢືນຢັນຢ່າງຈະແຈ້ງ ແລະຕັ້ງແຕ່ໃດໆມາ ບໍ່ເຄີຍມີບັນຫາກ່ຽວກັບ ເສັ້ນຊາຍແດນລະຫວ່າງ ລາວ-ໄທ ຢູ່ບໍລິເວນນັ້ນຈັກເທື່ອ.

ບຸກຄົນສຳຄັນຈຳນວນໜຶ່ງໃນວົງການ ການເມືອງ ແລະ ສື່ມວນຊົນຂອງໄທໄດ້ເວົ້າອອກສ່ວນໃດສ່ວນໜຶ່ງເຖິງຄວາມເປັນຈິງດັ່ງກ່າວນັ້ນ. ດັ່ງນັ້ນພວກປະຕິການຂວາຈັດໃນວົງການກຳອຳນາດໄທ ບໍ່ສາມາດຈະໄປແກ້ຕົວໃຫ້ແກ່ການກະທຳຂອງເຂົາ ໃນການບຸກຍຶດເອົາສາມໝູ່ບ້ານຂອງລາວ ດັ່ງກ່າວນັ້ນໄດ້.

# ພາກທີ II

ບ້ານໃໝ່, ບ້ານກາງ ແລະ ບ້ານສະຫວ່າງ ແມ່ນຂອງລາວ, ເພາະເຫດໃດພວກປະຕິ ການຂວາຈັດໃນວົງການກຳອຳນາດໄທຈຶ່ງບຸກຕີບຽດຍຶດ ສາມໝູ່ບ້ານນີ້ຢ່າງບັງອາດເປີດແປນ? ເຈດຕະນາຂອງພວກເຂົາແມ່ນຫຍັງ ?

1- ການບຸກໂຈມຕີບຽດຍຶດສາມໝູ່ບ້ານຂອງລາວ ແມ່ນເຫດການຮ້າຍແຮງທີ່ສຸດ ໂດຍມີ ການກະກຽມ ແລະ ຄິດໄລ່ມາແຕ່ດົນແລ້ວ.

ນັບແຕ່ມື້ສ້າງຕັ້ງ ສາທາລະນະລັດ ປະຊາ ທິປະໄຕປະຊາຊົນລາວ ເປັນຕົ້ນມາ ພວກປະຕິການ ຂວາຈັດໃນວົງການກຳອຳນາດໄທ ໄດ້ກໍ່ການເຄາະ

ຜິດດ້ວຍອາວຸດຫລາຍຄັ້ງຢູ່ລຽບຕາມຊາຍແດນລາວ
ໄທ ເຊິ່ງບໍ່ມີຄັ້ງໃດຮ້າຍແຮງຄືຄັ້ງນີ້. ໃນຄັ້ງ ນີ້
ພວກເຂົາໄດ້ບຸກໂຈມຕີບຸກຍຶດເຂົ້າດິນແດນ ລາວ
ດ້ວຍການເປີດບັ້ນຮົບຂະໜາດໃຫຍ ໂດຍນາຍພົນ
ອາທິດ ກຳລັງເອກ ເປັນຜູ້ຊີ້ນຳໂດຍກົງ ດ້ວຍ
ການໃຊ້ກຳລັງທະຫານຫລວງ, ລົດຖັງເກາະ,ປືນ
ໃຫຍ່ ແລະ ເຮືອບິນສອດແນມຄຸ້ມກັນ. ແຕ່ ເພື່ອ
ຫລອກລວງທາງສຽງ ແລະ ເພື່ອເປັນຂໍ້ອ້າງ ໃຫ້
ແກ່ການບຸກໂຈມຕີ, ພວກເຂົາໄດ້ເສກສັນ ປັ້ນ
ເລື່ອງວ່າ: "ກອງທະຫານລາວບຸກຍຶດສາມໝູ່
ບ້ານຂອງໄທ".

ຍິ່ງໄປກວ່ານັ້ນອີກ ພວກເຂົາຍັງໄດ້ສົ່ງກອງ
ທະຫານຫລວງມາປະຊິດຊາຍແດນຢູ່ບໍລິເວນທິດໃຕ້
ຂອງແຂວງໄຊຍະບູລີ; ຈັດຕັ້ງການຊ້ອມຮົບຫລາຍ
ຄັ້ງ ແລະ ປະກາດສັນຍານໄພຢູ່ຫລາຍແຫ່ງ ຕາມ
ແຂວງທີ່ຕິດກັບຊາຍແດນລາວ.

ສິ່ງທີ່ມີລັກສະນະຮ້າຍແຮງຂອງການ ກະ ທຳ
ບຸກໂຈມຕີບຸກຍຶດຂອງພວກປະຕິການຂວາຈັດ ໃນ

ວົງການກຳອຳນາດໄທເທື່ອນັ້ນແມ່ນພວກເຂົາໄດ້ບັງອາດໃຫ້ກອງກຳລັງທະຫານຫລວງບຸກໂຈມຕີບຽດຍຶດເອົາດິນແດນຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເຊິ່ງເປັນປະເທດທີ່ພວກເຂົາມີການພົວພັນທາງການທູດ, ເປັນປະເທດທີ່ ພວກເຂົາເຊັນຖະແຫລງການຮ່ວມນຳເຖິງສອງ ສະບັບໃນປີ 1979 ຮັບວ່າ ຈະເປັນບ້ານພີ່ເມືອງ ນ້ອງ ແລະ ເປັນປະເທດສະມາຊິກຂອງສະຫະປະຊາຊາດ ທີ່ພວກເຂົາເອງກໍຮັບຮູ້.

2- ການບຸກໂຈມຕີບຸກຍຶດຂອງພວກ ປະຕິການຂວາຈັດໃນວົງການກຳອຳນາດໄທດັ່ງກ່າວນັ້ນແມ່ນນອນຢູ່ໃນກົນອຸບາຍລວມຂອງພວກເຂົາ ທີ່ມຸ່ງໝາຍຈະຕ້ານສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ; ພ້ອມກັນນັ້ນກໍແມ່ນການສົມຮູ້ຮ່ວມຄິດກັບພວກປະຕິການໃນວົງການກຳອຳນາດ ປັກກິ່ງ ແລະ ບັນດາອິດທິກຳລັງຈັກກະພັດ ເພື່ອຕ້ານ ກັບສາມປະເທດອິນດູຈີນ.

ບໍ່ທັນເວົ້າເຖິງປະຫວັດສາດຍາວນານ, ພຽງ

ແຕ່ເບິ່ງຄືນປະຫວັດສາດ 40 ປີທີ່ຜ່ານມາກໍໄດ້ຢັ້ງຢືນຢ່າງຈະແຈ້ງວ່າ ພວກປະຕິການຂວາຈັດໃນວົງການກຳອຳນາດໄທ ຍາມໃດກໍໄດ້ອີງໃສ່ອິດທິ ກຳລັງຈັກກະພັດ ແລະ ພວກປະຕິການສາກົນເພື່ອປະຕິບັດຄວາມໄຝ່ຝັນຢາກຂະຫຍາຍອານາເຂດ ຂອງເຂົາເຂົ້າມາໃນດິນລາວ. ເມື່ອກ່ອນນັ້ນ ພວກເຂົາໄດ້ອີງໃສ່ພວກຟາຊິດ ຍີ່ປຸ່ນ ເພື່ອຢຶດເອົາໄຊຍະບູລີ ແລະ ດິນແດນຂອງແຂວງຈຳປາສັກຢູ່ ຝັ່ງຂວາແມ່ນ້ຳຂອງ ແຕ່ປີ 1941-1946. ດວຍຄວາມໄຝ່ຝັນນັ້ນ ເຂົາຈຶ່ງໄດ້ໃຫ້ອາເມລິກາໃຊ້ດິນ ໄທເປັນຖານທັບ ແລະ ສົ່ງກອງທະຫານໄທເຂົ້າຮ່ວມດຳເນີນສົງຄາມຮຸກຮານຂອງອາເມລິກາຢູ່ໃນສາມປະເທດອິນດູຈີນ. ປະຈຸບັນນີ້ ພວກເຂົາພັດໄດ້ສົມຮູ້ຮ່ວມຄິດກັບພວກປະຕິການໃນວົງການກຳອຳນາດຈີນ ແລະ ພວກຈັກກະພັດ ອອກແຮງລ້ຽງ ເກືອ, ເຝິກອົບຮົມ, ຈັດຕັ້ງ ແລະ ບັນຊາພວກປະຕິການລາວ ພັດຖິ່ນ ແລະໃຊ້ດິນໄທເປັນແປ້ນຢັ້ນ ເພື່ອໃຫ້ພວກນີ້ເຂົ້າມາປຸ້ນສະດົມ, ກໍ່ຄວາມວຸ້ນວາຍ, ທຳ

ລາຍຄວາມຢູ່ເຢັນເປັນສຸກຂອງປະຊາຊົນ ລາວ ,
ເໝືອນດັ່ງພວກເຂົາພວມຊ່ວຍເຫລືອພວກ ດັບສູນ
ເຊື້ອຊາດໂປນປົດ ແລະ ພັກພວກກັບຄືນມາຕ້ານ
ການຟື້ນຊີບຂອງປະຊາຊົນກຳປູເຈຍ. ການທີ່ພວກ
ປະຕິການຂວາຈັດໃນວົງການກຳອຳນາດໄທໄດ້ໃຊ້
ກຳລັງຂອງເຂົາເອງເຂົ້າມາບຸກຕີບຽດຍຶດເອົາດິນ
ແດນລາວເທື່ອນີ້ ຍັງສະແດງໃຫ້ເຫັນຈິດໃຈ ໂຫດ
ຮ້າຍສາມານຂອງພວກເຂົາຕື່ມອີກ.

ການບຸກໂຈມຕີບຽດຍຶດສາມໝູ່ບ້ານຂອງລາວ
ດັ່ງກ່າວນັ້ນ ບໍ່ແມ່ນສິ່ງບັງເອີນ, ມັນເກີດຂຶ້ນພາຍ
ຫລັງການໄປຢ້ຽມຢາມຈີນຂອງນາຍພົນອາທິດ ກຳ
ລັງເອກ ກັບຄືນມາບໍ່ເຫິງນານ, ເຂົາໄດ້ໄປຮອດ
ຊາຍແດນ ຈີນ-ຫວຽດນາມ ເພື່ອຮ່ຳຮຽນເອົາວິທີ
ລະເມີດຊາຍແດນຈາກຈີນ ທີ່ພວມຂະຫຍາຍສົງ
ຄາມ ເພື່ອບຽດຍຶດຕາມຊາຍແດນຂອງຫວຽດນາມ
ນາຍພົນ ອາທິດ ກຳລັງເອກ ຍັງແກ້ຄວາມໃຫ້ແກ່
ການໄປຢ້ຽມຢາມຈີນຫວ່າງມໍ່ໆນີ້ຂອງລັດຖະມົນ ຕີ
ການຕ່າງປະເທດໄທ ສິດທິ ສະເວດສີລາ ວ່າ ບໍ່

ມີສ່ວນກ່ຽວຂ້ອງຫຍັງເຖິງບັນຫາ "ພິພາດຢູ່ ຊາຍ
ແດນ" ກັບລາວ, ແຕ່ ສິດທິ ສະເວດສີລາ ເອງ
ພັດໄດ້ຮັບສາລະພາບວ່າ ເຂົາໄດ້ຍົກບັນຫານີ້ ມາ
ເວົ້າກັບລັດຖະມົນຕີການຕ່າງປະເທດຈີນ ຫວູເສ-
ຊຽນ ແລະ ປັກກິ່ງໄດ້ໃຫ້ການສະໜັບສະໜູນ ຕໍ່
ບາງກອກ ກ່ຽວກັບບັນຫາດັ່ງກ່າວນັ້ນ.

ຄວາມຈິງມັນຈະແຈ້ງດີແນວນັ້ນ, ແຕ່ ເລຂາ
ທິການໃຫຍ່ສະພາຄວາມໝັ້ນຄົງແຫ່ງຊາດໄທ ປະ
ສົງ ສູນສີລີ ຊ້ຳພັດເວົ້າຢ່າງບໍ່ອາຍວ່າ: ໄທ ບໍ່
ເຄີຍສະແຫວງຫາດິນແດນຂອງຜູ້ອື່ນມາເປັນ ຂອງ
ຕົນແມ້ນແຕ່ນ້ອຍດຽວ. (ໜັງສືພິມມະຕິຊົນ ຂອງ
ໄທ ສະບັບວັນທີ 23/6/1984).

ກົນອຸບາຍຂອງພວກປະຕິການຂວາຈັດໃນ ວົງ
ການກຳອຳນາດໄທ ໃນການຮຸກຮານບຽດຍຶດ ດິນ
ແດນລາວ ບໍ່ແມ່ນມັນຈະຢຸດຢູ່ພຽງສາມໝູ່ບ້ານດັ່ງ
ກ່າວເທົ່ານັ້ນ, ຫາກຍັງພວມອອກແຮງກໍ່ສ້າງສາມ
ໝູ່ບ້ານນັ້ນໃຫ້ກາຍເປັນຖານທີ່ໝັ້ນແນໃສ່ ເຄື່ອນ
ໄຫວທຳລາຍສາທາລະນະລັດປະຊາທິປະໄຕປະຊາ

ຈີນລາວ. ພ້ອມກັບການເສີມກຳລັງທະຫານໄທ , ພວກເຂົາຍັງໄດ້ສົ່ງພວກປະຕິການລາວພັດຖຸ່ມ ມັບເປັນພັນຄົນເຂົ້າປະຈຸດຊາຍແດນລາວ-ໄທຢູ່ຫລາຍບອນ, ພິເສດແມ່ນຢູ່ບໍລິເວນຕິດກັບເມືອງບໍ່ແຕນ, ແກ່ນທ້າວ ຂອງແຂວງໄຊຍະບູລີ.

ວິທະຍຸກະຈາຍສຽງກອງທັບໄທ ວັນທີ 26/6 ປີ 1984 ໄດ້ເວົ້າຢ່າງບັງອາດເປີດແປນອອກມາວາ: "...ແມ່ນຫຍັງຈະເກີດຂຶ້ນ ຖ້າປະເທດໄທຈະເປັນຝ່າຍຮຽກຮ້ອງໃຫ້ປະເທດລາວຄືນດິນແດນ 62.500 ຕາລາງກິໂລແມັດ ທີ່ຖືກຝະລັ່ງເສດກົດດັນໃຫ້ເຮົາຕ້ອງຍອມເສຍໃຫ້ໃນອະດີດ. ແມ່ນຫຍັງຈະເກີດຂຶ້ນ ຖ້າປະເທດໄທບໍ່ເວົ້າເຖິງບັນຫາສາມຫມູ່ບ້ານນັ້ນເປັນຂອງໃຜ ແຕ່ຈະເວົ້າເຖິງແຜນດິນທັງຫລາຍທີ່ຢູ່ເລີຍສາມຫມູ່ບ້ານນັ້ນອອກໄປ ເລີກເຂົ້າໄປເຖິງແມ່ນ້ຳຂອງ ເຊິ່ງອະດີດນັ້ນເປັນຂອງໄທແທ້" (ຫນັງສືພິມ ນະຕິຈິນ ສະບັບ ວັນທີ 26/6/1984).

ໃນສີ່ສິບປີ ທີ່ຜ່ານມາ, ພວກປະຕິການ ຂວາ

ຈັດ ໃນວົງການກຳອຳນາດໄທ ໄດ້ອີງໃສ່ ບັນດາ ອິດທິກຳລັງຈັກກະພັດ ແລະ ພວກປະຕິການສາກົນ ເພື່ອປະຕິບັດຄວາມໄຝ່ຝັນໃນການຂະຫຍາຍອານາເຂດ, ລ້ວນແຕ່ຖືກປະລາໄຊ. ຖ້າວ່າ ເຂົາຫາກຍັງສືບຕໍ່ເດີນໄປຕາມຮອຍເກົ່າ ແນ່ນອນພວກເຂົາກໍຈະຖືກປະລາໄຊຢ່າງໜັກໜ່ວງກວ່າເກົ່າ.

3- ກອນການບຽດຢຶດກໍຄືຫລັງຈາກການບຽດຢຶດເອົາສາມໝູ່ບ້ານຂອງລາວແລ້ວ, ຝ່າຍໄທໄດ້ໃຊ້ຄວາມເວົ້າ "ເຈລະຈາ" ເປັນເຄື່ອງບິເພື່ອຫຼອກລວງ, ປົກປິດການກະທຳຂອງພວກເຂົາທີ່ຜ່ານມາ ແລະ ການກະກຽມທີ່ຈະສືບຕໍ່ເຮັດອັນເປັນປໍລະປັກຂອງພວກເຂົາຕ້ານກັບ ສາທາລະນະລັດປະຊາ ທິປະໄຕປະຊາຊົນລາວ.

ວັນທີ 31 ພຶດສະພາ 1984, ນາຍພົນ ອາທິດ ກຳລັງເອກ ຕັ້ງບັນຫາວ່າ ຈະແກ້ໄຂຂໍ້ພາດຊາຍແດນກັບລາວ ດ້ວຍການເຈລະຈາ. ວັນທີ 5 ມິຖຸນາ 1984, ເອກອັກຄະລາຊະທູດໄທ ທ່ານສີມພົງ ຝ່າຍຈຳປາ ກໍໄດ້ແຈ້ງຕໍ່ກະຊວງການຕ່າງ

ປະເທດລາວວ່າ ໄທຍິນເຊີຍການແກ້ໄຂບັນຫາຂັດແຍ້ງດ້ວຍການເຈລະຈາ. ແຕນ໊ລຸນມາ, ວັນ ທີ 6 ມິຖຸນາ 1984, ກະໂຕອາທິດກຳລັງເອກເອງ ໄດ້ອອກຄຳສັ່ງບຸກໂຈມຕີບຸດຍຶດສາມໝູ່ບ້ານຂອງ ລາວ ໂດຍລືມຄວາມເວົ້າວ່າ ຈະເຈລະຈາ ນັ້ນ ຢ່າງສິ້ນເຊີງ.

ພວກເຂົາຈິງໃຈເຈລະຈາແທ້ບໍ່? ເຈດຕະນາ ແລະ ລາຍຫລ້ຽມຂອງພວກເຂົາໃນການເຈລະຈາ ແມ່ນແນວໃດແທ້? ຄວາມຈິງດັ່ງຕໍ່ໄປນີ້ ຈະພິ ສູດ ໃຫ້ເຫັນແຈ້ງ:

ໃນໄລຍະແຕ່ວັນທີ 28/6 ເຖິງວັນທີ 15/8 ປີ 1984, ດ້ວຍເຈດຕະນາດີຂອງຕົນ, ຝ່າຍລາວ ໄດ້ມີການພົບປະກັບຝ່າຍໄທ ໂດຍຜ່ານການ ທູດ ແລະ ໄດ້ເປັນເຈົ້າການແຕ່ງຄະນະຜູ້ແທນຂອງຕົນ ໄປບາງກອກ ເພື່ອພົບປະເຈລະຈາກັບຝ່າຍໄທ.

ກຽວກັບເນື້ອໃນພົບປະ ແລະ ເຈລະຈາ, ບັນຫາພື້ນຖານທີ່ເປັນຂໍກະແຈກວ່າໝູ່ໝົດແມ່ນຢືນຢັນ ອະທິປະໄຕຂອງລາວກຽວກັບສາມໝູ່ບ້ານດັ່ງກ່າວ

ກ່ອນອື່ນຫມົດ ທວງໃຫ້ຝ່າຍໄທ ຕ້ອງຖອນກອງທະຫານ, ພະນັກງານ, ທະຫານ ແລະພົນລະເຮືອນຂອງເຂົາອອກຈາກສາມຫມູ່ບ້ານນັ້ນ. ໃນຕະຫຼອດເວລາການພົບປະ ແລະ ເຈລະຈາ. ຝ່າຍໄທໄດ້ຊອກຫູກເລຫລ່ຽມ ເພື່ອຫລົບຫລີກການເລັ່ງ ທວງອັນຊອບທຳຂອງຝ່າຍລາວ; ພວກເຂົາຍັງທວງໃຫ້ຝ່າຍລາວຕ້ອງມີການຕອບແທນ ການຖອນ ກຳລັງທະຫານໄທ.

ໃນການພົບປະ ແຕ່ວັນທີ 28/6 ເຖິງວັນ ທີ 20/7/1984 ລະຫວ່າງທ່ານຄຳພັນ ສິມມາລາວົງ, ເອກອັກຄະລັດຖະທູດລາວ ກັບທ່ານ ຊະວະລິດ ຮອງຫົວຫນ້າເສນາທິການທະຫານບົກຝ່າຍຍຸດທະການ ເຊິ່ງຕາງຫນ້າໃຫ້ລັດຖະບານ ແລະກອງທັບໄທນັ້ນ, ຝ່າຍໄທຍອມຮັບຖອນທະຫານ,ສົ່ງປະຊົນກັບຄືນບ້ານເດີມ ແລະ ໃຊ້ຄ່າເສຍຫາຍທີ່ພວກເຂົາເປັນຜູ້ກໍ່ຂຶ້ນ, ບັນຫານີ້ ເຂົາຮ້ອງຂໍໃຫ້ ລະບຸໄວ້ໃນບົດບັນທຶກຂໍ້ຕົກລົງ ໂດຍທີ່ບໍ່ລະບຸໄວ້ໃນ ປະກາດແຈ້ງການຮ່ວມ; ເອກະສານສອງສະບັບນີ້ຈະ

ໄດ້ຮັບການລົງນາມ ໂດຍຜູ້ຕາງໜ້າທີ່ມີ ອຳນາດ ເຕັມຂອງທັງສອງຝ່າຍ.

ໃນການເຈລະຈາ ແຕ່ວັນທີ 21-23/7/84 ລະຫວ່າງຄະນະຜູ້ແທນ ລາວ ແລະ ໄທ ທີ່ ບາງ ກອກ ຝ່າຍໄທໄດ້ປະຕິເສດຄວາມເຫັນຂອງຕົນ, ວາງ ເງື່ອນໄຂໃຫ້ແກການຖອນກຳລັງທະຫານໄທຄື: ໄທ ຖອນທະຫານ, ແຕລາວບໍ່ໃຫ້ສົ່ງກຳລັງທະຫານ ເຂົ້າສາມໝູ່ບ້ານ; ຈົ່ງບໍ່ຫນຳໄທ ແລະ ລາວ ຕ້ອງຖອນທະຫານຂອງຕົນອອກຫາງຈາກບໍລິ ເວນ ສາມໝູ່ບ້ານ ໃນວົງລັດສະໝີ 30 ກິໂລແມັດ.

ໃນການພົບປະກັນ ແຕ່ວັນທີ 24/7 ເຖິງວັນ ທີ 5/8/1984 ຝ່າຍໄທ ໄດ້ປິ່ນບັນຫາອີກ ເທື່ອ ໜຶ່ງ, ເຂົາຍົກຂຶ້ນວາ: ໄທຈະຖອນທະຫານຂອງ ຕົນ ພາຍຫລັງທີ່ຄະນະກຳມະການເຕັກນິກໄດ້ໄປ ສຳຫລວດພູມປະເທດຕົວຈິງ ແລະ ປັກຫລັກໝາຍ ເຂດແດນສຳເລັດສາກອນ; ຕໍ່ມາຝ່າຍໄທຫວງໃຫ້ ມີການຄົງສະພາບ ທີ່ເປັນຢູ່ໃນປັດຈຸບັນ (ໝາຍ ຄວາມວາ ກອງທະຫານໄທຍັງສືບຕໍ່ຍຶດຄອງ ສາມ

ໝູ່ບ້ານ).

ໃນການເຈລະຈາ ແຕ່ວັນທີ 6/8 ເຖິງວັນທີ 15/8/1984 ລະຫວ່າງຄະນະຜູ້ແທນລັດຖະບານລາວ ນຳໂດຍທ່ານ ສຸບັນ ສະຣິດທິຣາດ, ຣອງລັດຖະມົນຕີກະຊວງການຕ່າງປະເທດກັບຄະນະ ຜູ້ແທນລັດຖະບານໄທ, ຝ່າຍໄທໄດ້ຫລີບຫລີກ ຢ່າງສິ້ນເຊີງ ບັນດາການຖອນກອງທະຫານ; ເຂົາກໍບໍ່ໄດ້ເອື່ຍເຖິງ ບົດບັນທຶກຂໍ້ຕົກລົງແຕ່ປະການ ໃດເລີຍ. ຮ່າງຖະແຫລງການຮວມ 8 ຂໍ້ທີ່ເຂົາ ສະເໜີຕໍ່ຝ່າຍລາວ ເມື່ອວັນທີ 10/8/1984 ນັ້ນເຂົາກໍບໍ່ໄດ້ກ່າວເຖິງການຖອນທະຫານໄທຈັກດີ້.

ໃນການພົບປະນອກໂຕະເຈລະຈາ ເມື່ອວັນທີ 13/8/1984, ຝ່າຍໄທສະເໜີຮູບການໜຶ່ງຄື: ວັນທີ 14/8 ທ່ານ ອາສາ ສາລະສິນ, ປະລັດກະຊວງການຕ່າງປະເທດຈະນຳທ່ານຄຳພັນສົມມາລາວົງ, ເອກອັກຄະລັດຖະທູດລາວເຂົ້າພົບ ນາຍພິນ ອາທິດ ກຳລັງເອກ ຜູ້ບັນຊາການສູງສຸດກອງທັບໄທ ແລະ ເຈາະຈົ້ມໃຫ້ທ່ານເອກອັກຄະລັດຖະ

ທູດ ລາວກ່າວຕໍ່ນາຍພົນ ອາທິດກຳລັງເອກ ວ່າ: "ສະເໜີໃຫ້ຝ່າຍໄທ ຖອນທະຫານຂອງຕົນ ທັງໝົດອອກຈາກສາມໝູ່ບ້ານ, ສົ່ງປະຊາຊົນ ລາວກັບຄືນບ້ານເດີມ ແລະ ກຳນົດການຊ່ວຍເຫລືອແກ່ປະຊາຊົນລາວ ໃນສາມໝູ່ບ້ານ ທີ່ໄດ້ຮັບ ເຄາະຮ້າຍ. ຝ່າຍລາວບໍ່ມີກອງທະຫານຫລວງຢູ່ໃນສາມໝູ່ບ້ານກ່ອນປັກຫລັກໝາຍເຂດແດນ" ນາຍ ພົນອາທິດກຳລັງເອກ ຈະຕອບວ່າ: "ເຫັນດີຕາມ ຂໍ້ສະເໜີຂອງທ່ານເອກອັກຄະລັດຖະທູດລາວ. ຝ່າຍໄທຮັບປະກັນວ່າ ຈະຖອນທະຫານຂອງຕົນ ອອກຈາກສາມໝູ່ບ້ານ ນັບແຕ່ ເວລາ... ວັນທີ... ເປັນຕົ້ນໄປ, ສົ່ງປະຊາຊົນລາວສາມໝູ່ບ້ານ ກັບຄືນບ້ານເດີມໃຫ້ໝົດ, ຫລັງຈາກນັ້ນສອງຝ່າຍລົງໄປພິສູດຮ່ວມກັນກັບທີ່ ເພື່ອກຳນົດການຊ່ວຍເຫລືອປະຊາຊົນສາມໝູ່ບ້ານທີ່ຖືກເຄາະຮ້າຍ ແລະ ດຳເນີນການປັກຫລັກໝາຍເຂດແດນ...". ໃນເມື່ອຍົກເອົາຂໍ້ສະເໜີດັ່ງກ່າວຂຶ້ນນັ້ນ, ຝ່າຍ ໄທຍັງໄດ້ເນັ້ນວ່າ: "ນີ້ແມ່ນຂໍ້ສະເໜີສຸດທ້າຍ, ຖ້າ

ວ່າຝ່າຍລາວບໍ່ຮັບເອົາມັນຈະກາຍກຳນົດ ແລະຈະຢຸດຕິການເຈລະຈາ ລະຫວ່າງສອງຝ່າຍ" ອັນນັ້ນໝາຍຄວາມວ່າ ຝ່າຍໄທຫວັງໃຫ້ຝ່າຍລາວ ຕ້ອງພົບປະກັບນາຍພົນ ອາທິດກຳລັງເອກ ໂດຍກົງ ຜູ້ເຊິ່ງເປັນຕົວການໃນການບຸກຍຶດເອົາສາມ ໝູ່ບ້ານຂອງລາວ ເພື່ອຮັບເອົາເງື່ອນໄຂບໍ່ສົ່ງ ກອງທະຫານລາວເຂົ້າສາມໝູ່ບ້ານ.

ຕໍ່ມາ, ວັນທີ 14/8/1984, ປະລັດ ກະຊວງການຕ່າງປະເທດໄທ ໄດ້ແຈ້ງໃຫ້ເອກອັກຄະລັດຖະທູດລາວຊາບກ່ຽວກັບຄວາມເຫັນຂອງ ນາຍພົນອາທິດກຳລັງເອກ ໂດຍມີເນື້ອໃນ 5 ຂໍ້ດັ່ງລຸ່ມນີ້:

1- ຖ້າໄທຖອນທະຫານ, ບໍ່ໃຫ້ຝ່າຍລາວສົ່ງ ກອງທະຫານເຂົ້າໄປແທນ.

2- ສອງຝ່າຍ ໄປພິສູດ ພູມປະເທດຕົວຈິງ.

3- ສອງຝ່າຍດຳເນີນການປັກຫລັກ ໝາຍເຂດແດນ.

4- ສອງຝ່າຍ ພິສູດການສົ່ງປະຊາຊົນ ກັບ

ຄືນບ້ານເດີມຕາມຄວາມສະໝັກໃຈ.

5- ສອງຝ່າຍຊ່ວຍເຫລືອປະຊາຊົນ ສາມໝູ່ບ້ານທີ່ຖືກເຄາະຮ້າຍ.

ຖ້າຝ່າຍລາວ ບໍ່ຮັບເອົາຂໍ້ສະເໜີ ດັ່ງກ່າວແລ້ວ ການເຈລະຈາລະຫວ່າງ ຄະນະຜູ້ແທນທັງສອງຈະຢຸດຕິໃນເວລາ 12 ໂມງ ຂອງວັນ ທີ 15/8/1984. ແລະ ເຂົາໄດ້ປະຕິບັດ ຕາມແຜນການທີ່ເຂົາໄດ້ກະກຽມໄວ້ນັ້ນ.

ຂໍ້ສະເໜີ ທີ່ວ່າ "ໄທຖອນທະຫານ, ບໍ່ໃຫ້ຝ່າຍລາວສົ່ງກອງທະຫານເຂົ້າສາມໝູ່ບ້ານ" ທີ່ຝ່າຍໄທສະເໜີມານັ້ນ ເນື້ອແທ້ແມ່ນເຂົາ ຢາກເຮັດໃຫ້ສາມໝູ່ບ້ານຂອງລາວກາຍເປັນເຂດປອດທະຫານ, ເປັນເຂດຍາດແຍ່ງ, ໃນພາກຕົວ ຈິງແລ້ວແມ່ນເພື່ອແກຍາວການຍຶດຄອງຂອງພວກເຂົາຕໍ່ສາມໝູ່ບ້ານຂອງລາວ. ພວກເຂົາໄດ້ຕີ ລວາດກວາດພຽງ ລະຫວ່າງຜູ້ໄປຮຸກຮານກັບຜູ້ຖືກ ຮຸກຮານ ຂໍ້ສະເໜີທີ່ມີລັກສະນະເປັນຄຳຂາດດັ່ງກ່າວຂອງຝ່າຍໄທ ແມ່ນເປັນການຈອງຫອງບັງອາດ ທີ່

ຝ່າຍລາວບໍ່ສາມາດຮັບເອົາໄດ້, ການກະທຳອັນນີ້ມັນກົງກັນຂ້າມກັບຄວາມເວົ້າຂອງເຂົາທີ່ວ່າ : ເຈລະຈາບົນຈິດໃຈ "ຖືກຕ້ອງ ແລະ ຍຸດຕິທຳ " ນັ້ນຢ່າງສິ້ນເຊີງ.

ກຣຸວກັບຂໍ້ສະເໜີໃຫ້ຖອນກອງທະຫານ ຂອງແຕ່ລະຝ່າຍອອກຫ່າງຈາກບໍລິເວນນີ້ 30 ກິໂລແມັດນັ້ນ ເຂົາທຳທ່າວ່າມີເຈດຕະນາດີ ແລະມີຈິດໃຈຢາກສ້າງສັນແທ້, ຢາກຢຸດຕິການປະເຊີນໜ້າກັນທາງທະຫານ, ຢາກສະກັດກັ້ນການປະທະ ກັນດ້ວຍກຳລັງອາວຸດ ໂດຍເວົ້າຍົວະເຍົ້າວ່າ ຖ້າຝ່າຍລາວຫາກຖອນ ຝ່າຍໄທກໍຈະຖອນຄືກັນ , ໝາຍຄວາມວ່າ ໄທບອກໃຫ້ລາວຕ້ອງຖອນທະຫານຂອງລາວອອກຈາກດິນແດນລາວ. ຄວາມເວົ້າຂອງຝ່າຍໄທນັ້ນແມ່ນເຕັມໄປດ້ວຍກົນອຸບາຍ ລາຍຫລຽມ ອັນເລິກແລບທີ່ສຸດ; ມັນສະແດງໃຫ້ ເຫັນເຈດຕະນາອັນແທ້ຈິງຂອງພວກເຂົາທີ່ໝາຍ ຢາກຄວບຄຸມເອົາທັງສາມໝູ່ບ້ານໃນພາກຕົວຈິງ ແລະໃຊ້ບອນນີ້ເປັນແປ້ນຢັນ ເພື່ອເຄື່ອນໄຫວ ທຳລາຍ

ໃນບໍລິເວນຕ່າງຈາກຊາຍແດນເລິກເຂົ້າໄປ ເຖິງ 30 ກິໂລແມັດ ຮອດແດນແມ່ນ້ຳຂອງຂອງລາວອີກ ສິ່ງທີ່ເປັນອັນຕະລາຍທີ່ສຸດແມ່ນເຂົາປະຕິເສດ ອະທິປະໄຕຂອງລາວຢູ່ໃນສາມໝູ່ບ້ານ ແລະ ເອົາວິທີນບຽດປຶດເອົາດິນລາວເທື່ອລະພາກສ່ວນ, ຄືໃຊ້ກຳລັງທະຫານລວງລະເມີດຊາຍແດນລາວ ແລ້ວບັງຄັບລາວເຈລະຈາ ເພື່ອກ້າວໄປຢຶດເອົາ ບ່ອນອື່ນ ໂດຍທວງໃຫ້ຝ່າຍລາວຖອນທະຫານ ເພື່ອອຳນວຍຄວາມສະດວກໃຫ້ກອງທະຫານຂອງເຂົາ ຄືບໜ້າໄປເລື້ອຍໆ. ອັນນີ້ ສະແດງໃຫ້ເຫັນແຈ້ງວ່າ ເຂົາຍັງບໍ່ທັນປະລະເຈດຕະນາຂະຫຍາຍອາ ນາເຂດຂອງເຂົາຕໍ່ລາວເທື່ອ, ເຂົາຍັງບໍ່ທັນ ປະລະກົນອຸບາຍພື້ນຖານ ໃນການທຳລາຍ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ທີ່ເຂົາມີມາແຕ່ເຕິງແລ້ວ.

ຄວນເຫັນແຈ້ງວ່າ ໃນການເຈລະຈານີ້, ຍາມໃດພວກເຂົາກໍ່ໃຊ້ເລຫລ່ຽມສອງໜ້າຄື: ດ້ານໜຶ່ງເຂົາເວົ້າເຖິງ "ຄວາມເປັນມິດ, ຄວາມເຂົ້າອົກ

ເຂົ້າໃຈເຊິ່ງກັນ ແລະກັນ", ເພື່ອສະແດງທ່າທີ ວ່າ ພ້ອມທີ່ຈະເປີກສາຫາລື, ພ້ອມທີ່ຈະຜ່ອນ ສັ້ນ ຜ່ອນຍາວ, ແຕ່ໃນຕົວຈິງແລ້ວ ເຂົາພັດຫລົບຫລີກ ປັ້ນຄວາມ, ສະເຫນີດັດແປງແກ້ໄຂບັນດາຂໍ້ຄວາມ ທີ່ໄດ້ຕົກລົງນຳຝ່າຍລາວແລ້ວນັ້ນ. ຝ່າຍລາວ ສະ ແດງເຈດຕະນາດີເທົ່າໃດ ແມ່ນຝ່າຍໄທກໍບຸກ ຂຶ້ນ ໃຫ້ໄດ້ຕາມຄວາມມັກຂອງເຂົາ, ເມື່ອຝ່າຍ ລາວ ສະແດງທ່າທີທີ່ເດັດດ່ຽວ ເຂົາກໍຖ່ອຍຊົ່ວຄາວ , ຍອມປະ ປະໂຫຍກນີ້, ອັນນີ້, ແຕ່ຊ້ຳພັດສະເຫນີ ຕື່ມປະໂຫຍກໃຫມ່, ວັກໃຫມ່ ທີ່ເປັນຜົນໃຫ້ ເຂົາ ແລະ ເສຍຫາຍໃຫ້ຝ່າຍລາວ.

ໃນຕະຫລອດເວລາເຈລະຈາທີ່ຜ່ານມາ, ຝ່າຍ ໄທຍາມໃດກໍເນັ້ນຫນັກ ແລະ ອອກແຮງຊຸກດັນໃຫ້ ຝ່າຍລາວຕັ້ງຄະນະກຳມະການເຕັກນິກລວມ, ໃຫ້ ປະຊຸມຄະນະກຳມະການດັ່ງກ່າວ, ໃຫ້ສອງ ຝ່າຍ ໄປສຳຫລວດພູມປະເທດຕົວຈິງໃນບໍລິເວນສາມຫມູ່ ບ້ານ. ພວກເຂົາຖືວ່າອັນນັ້ນແມ່ນທາງອອກ".

ເພາະເຫດໃດ ຝ່າຍໄທຈິ່ງຢາກຕັ້ງຄະນະກຳ

ນະການເຕັກນິກ ແລະ ຢາກໄປສຳຫລວດ ພິສູດພູມປະເທດຕົວຈິງໂດຍຖືເປັນສິ່ງຈຳເປັນ ແລະສຳຄັນຄືແນວນັ້ນແທ້?

ດັ່ງທີ່ໄດ້ຊີ້ແຈງມາຢ່າງແຈ່ມແຈ້ງແລ້ວວ່າ : ເສັ້ນຊາຍແດນຢູ່ບໍລິເວນນີ້ ໄດ້ກຳນົດຢ່າງຈະແຈ້ງ ແລະ ໄດ້ປັກຫລັກໝາຍເຂດແດນມາເປັນ ເວລາຫລາຍທົດສະຕະຫວັດແລ້ວ. ການຕັ້ງບັນຫາ ໃຫ້ສ້າງຕັ້ງ "ຄະນະກຳມະການເຕັກນິກ" ແລະ ບັນຫາໄປຄົ້ນຄວ້າສຳຫລວດພູມປະເທດຕົວຈິງຢູ່ໃນ 3 ໝູ່ບ້ານນັ້ນເປັນອັນຈະແຈ້ງວ່າ ພວກເຂົາ ປະຕິເສດເສັ້ນຊາຍແດນປະຫວັດສາດ ໂດຍຫວັງຈະ ພິຈາລະນາເສັ້ນຊາຍແດນໃນບໍລິເວນນັ້ນໃຫມ, ອັນເປັນການສ້າງແບບຢ່າງອ້າງອີງ ເພື່ອຫວັງໃຫ້ ມີການພິຈາລະນາເສັ້ນຊາຍແດນທັງໝົດຄືນໃໝ່ໃນພາຍໜ້າ. ອັນນັ້ນ ກໍໝາຍຄວາມວ່າ ເປັນການປະຕິເສດອະທິປະໄຕຂອງລາວຕໍ່ສາມໝູ່ບ້ານ ໄປໃນຕົວ, ເຮັດໃຫ້ສາມໝູ່ບ້ານຂອງລາວກາຍເປັນເຂດຍາດແຍ່ງ. ອັນນີ້ແມ່ນກົນອຸບາຍລາຍຫລອມ

ເພື່ອຫນ່ວງດຶງແກ່ຍາວການຢຶດຄອງຂອງເຂົາ ຕໍ່ໄປ; ສ້າງຄວາມໄຝ່ຝັນ, ຕົວະຍົວະຫລອກ ລວງທາງສຽງ, ທຳທ່າດີວ່າ ຫລັກຫມັ້ນ ແລະ ທັດສະນະຂອງສອງຝ່າຍໄດ້ຫຍັບເຂົ້າໃກ້ກັນ ແລະ ພວມພ້ອມກັນໄປສຳຫລວດຕົວຈິງ ເພື່ອພ້ອມກັນ ແກ້ໄຂບັນຫາ, ຫວັງຫລົບຫລີກປາຍຫອກຂອງທາງ ສຽງພາຍໃນປະເທດໄທ ກໍຄືໃນເວທີສາກົນ ທີ່ພວມສຸມໃສ່ພວກປະຕິການຂວາຈັດໃນວົງການກຳອຳ ນາດໄທ, ຫວງໃຫ້ພວກເຂົາຕ້ອງຢຸດຕິການ ຮຸກຮານບຽດຢຶດ ແລະ ຖອນກຳລັງອອກຈາກສາມຫມູ່ບ້ານຂອງລາວ.

- ກຽວກັບບັນຫາ ສົ່ງປະຊາຊົນສາມຫມູ່ບ້ານທີ່ຖືກບັງຄັບໄປໄທ ໃຫ້ກັບຄືນບ້ານເດີມ ກໍຄືບັນຫາໃຊ້ແທນຄ່າເສຍຫາຍໃຫ້ແກ່ປະຊາຊົນສາມຫມູ່ບ້ານອັນເນື່ອງມາຈາກການກະທຳທີ່ເປັນໂທດກຳ ຂອງພວກເຂົານັ້ນ, ຝ່າຍໄທ ຊໍ້າພັດຊອກຫາວິທີ ເພື່ອຫລົບຫລີກ. ພວກເຂົາຍັງໄດ້ບັງອາດສະເຫນີວ່າ: ປະຊາຊົນສາມຫມູ່ບ້ານ "ຈະໄດ້ກັບຄືນບ້ານ ເດີມ

ຂອງຕົນຕາມຄວາມສະໝັກໃຈ, ດ້ວຍການ ພິສູດ
ຂອງທັງສອງຝ່າຍ".

- ຝ່າຍໄທໄດ້ບັງຄັບປະຊາຊົນໃນສາມ ໝູ່ບ້ານໄປໄທ, ເຂົາຕ້ອງສົ່ງປະຊາຊົນທັງໝົດ ກັບຄືນບ້ານເດີມ. ກອງທະຫານໄທໄດ້ກໍ່ໂທດກໍາ, ກໍ່ຄວາມເສຍຫາຍທາງດ້ານຊີວິດ ແລະ ຊັບສິນຂອງປະຊາຊົນໃນສາມໝູ່ບ້ານນັ້ນ ເຂົາຕ້ອງ ໃຊ້ແທນຢ່າງເໝາະສົມ, ຝ່າຍໄທບໍ່ມີສິດວາງ ເງື່ອນໄຂໃດໆ, ຍິ່ງໄປກວ່ານັ້ນ ພວກເຂົາກໍບໍ່ມີສິດທວງໃຫ້ຝ່າຍລາວແບກຫາບຄວາມຮັບຜິດຊອບຮ່ວມກັບຝ່າຍໄທຕໍ່ການກະທໍາອັນເຕັມໄປດ້ວຍໂທດກໍາທີ່ເຂົາເປັນຜູ້ກໍ່ຂຶ້ນນັ້ນ.

ຄວາມຈິງດັ່ງກ່າວມາເທິງນັ້ນ ມັນສະແດງໃຫ້ເຫັນວ່າ ທາງທ້າຍເດືອນພຶດສະພາ ປີ 1984, ຝ່າຍໄທ ໄດ້ຍົກປ້າຍເຈລະຈາຂຶ້ນມາ ເພື່ອປົກປິດການກະທໍາອັນເປັນການກະກຽມບຸກຍຶດຂອງພວກເຂົາ. ຫລັງຈາກໃຊ້ກໍາລັງອາວຸດບຸກຍຶດເອົາ 3 ໝູ່ບ້ານ ວັນທີ 6 ມິຖຸນາ ປີ 1984 ແລ້ວ, ພວກ

ເຂົາກໍໄດ້ຍົກການເຈລະຈາມາເປັນຂໍ້ອ້າງ ເພື່ອ
ໃຫ້ຝ່າຍລາວຫລົງເຊື່ອ ແລ້ວປ່ອຍໃຫ້ພວກເຂົາກະ
ກຽມ ເພື່ອເຮັດໃຫ້ການບຸກຍຶດຂອງເຂົາ ຂະ
ຫຍາຍກວ້າງອອກໄປສູ່ດິນລາວບ່ອນອື່ນອີກ. ຍ້ອນ
ລັດຖະບານ ແລະ ປະຊາຊົນລາວຄັດຄ້ານແຮງ ,
ຍ້ອນມີຫລາຍຄົນໃນວົງການການເມືອງ ແລະ ປະ
ຊາຊົນໄທບໍ່ເຫັນພ້ອມ ແລະ ຖືກທາງສຽງ ສາກົນ
ກ່າວປະນາມການຮຸກຮານ, ດັ່ງນັ້ນ, ຝ່າຍໄທຈຶ່ງ
ຈຳຕ້ອງເຂົ້າມານັ່ງໂຕະເຈລະຈາ ເພື່ອຍົວະອອຍ
ແລະ ຫລອກລວງທາງສຽງ. ໃນການເຈລະຈາ,
ເຂົາຫາວິທີ ເພື່ອຫນວງຫນຽວການຖອນທະຫານ
ໄທ, ແກ່ຍາວການຍຶດຄອງດິນແດນລາວ ຫວັງຈະ
ເອົາສາມຫມູ່ບ້ານຂອງລາວກາຍເປັນເຂດປອດທະ
ຫານ ແລະ ເຂດຍາດແຍ່ງ, ຫລົບຫລີກການເຮັດ
ໃຫ້ສະພາບການໃນສາມຫມູ່ບ້ານຄືນສູ່ຄວາມ ເປັນ
ປົກກະຕິ ຄືກ່ອນມີທະຫານໄທບຸກຍຶດ ວັນທີ 6
ມິຖຸນາ ປີ 1984. ເມື່ອເຫັນວ່າ ສວຍໃຊ້ ການ
ເຈລະຈາ ເພື່ອບີບລາວໃຫ້ຮັບເອົາຂໍ້ສະເຫນີອັນ

ໄຮ້ເຫດຜົນຂອງເຂົາ ແລະຕົວະຍົວະຫລອກ ລວງ
ທາງສຽງບໍ່ໄດ້ ກົງກັນຂ້າມ ທາງສຽງນັບນີ້ ນັບ
ເຫັນແຈ້ງວ່າ ຝ່າຍລາວເປັນຝ່າຍທີ່ເປັນທຳ, ພວກ
ເຂົາກໍ່ປະກາດຢຸດຕິການເຈລະຈາໂດຍລຳພັງ ແຕ່
ຝ່າຍດຽວ. ອັນນີ້ແມ່ນເນື້ອແທ້ແຫ່ງເຈດ ຕະນາ
ຂອງຝ່າຍໄທໃນການເຈລະຈາ.

ເຫັນຈຳເປັນຕ້ອງກ່າວຕື່ມວ່າ ຝ່າຍໄທໄດ້ຫລີບ
ຫລີກຂໍ້ສະເຫນີຂອງຄະນະຜູ້ແທນລັດຖະບານລາວໃນ
ການຂໍເຂົ້າພົບນາຍົກລັດຖະມົນຕີ ແລະ ເຈົ້າຊີວິດ
ໄທ ເພື່ອມອບສານຂອງປະທານສະພາລັດຖະມົນຕີ
ແລະ ປະທານປະເທດແຫ່ງສາທາລະນະລັດປະຊາ
ທິປະໄຕປະຊາຊົນລາວ. ພວກເຂົາໄດ້ວາງເງື່ອນ
ໄຂໃຫ້ແກ່ການເຂົ້າພົບນັ້ນວ່າ: "ມັນຂຶ້ນກັບ ການ
ຄືບຫນ້າຂອງການເຈລະຈາ"; ເຂົາຖືວ່າ ບັນຍາ
ກາດຂອງການເຈລະຈາ ຍັງບໍ່ທັນອຳນວຍ, ຜົນ
ຂອງການເຂົ້າພົບຈະເປັນໄປໃນທາງລົບ".ອັນນັ້ນ
ແມ່ນທາທີ ທີ່ບໍ່ເປັນປົກກະຕິໃນຂະນະທີ່ສອງ ປະ
ເທດມີການພົວພັນທາງການທູດນຳກັນ ແລະ ໃນ

ຂະນະທີ່ທັງສອງຝ່າຍພວມເຈລະຈາກັນໂດຍ ສັນຕິ ເພື່ອພ້ອມກັນແກ້ໄຂບັນຫາການພົວພັນລະຫວ່າງ 2 ປະເທດ...ສິ່ງບັງອາດຈອງຫອງໄປກວ່ານັ້ນແມ່ນ ພວກເຂົາວາງເງື່ອນໄຂໃຫ້ແກ່ຝ່າຍລາວຕ້ອງເຂົ້າ ພົບ ອາທິດກຳລັງເອກ ກ່ອນແລ້ວຈິ່ງໄດ້ເຂົ້າ ພົບ ນາຍົກລັດຖະມົນຕີ ແລະ ເຈົ້າຊີວິດໄທ.

ທຸກຄົນຕ່າງກໍ່ຮູ້ດີວ່າ ແມ່ນອາທິດກຳລັງເອກ ເອງ ເປັນຜູ້ຊີ້ນຳການບຸກໂຈມຕີຮຸກຮານ ບຸກຍຶດ ເອົາສາມໝູ່ບ້ານຂອງລາວໂດຍກົງ, ກໍ່ຄວາມເຄັ່ງ ຕຶງຂຶ້ນໃນເຂດຊາຍແດນ ແລະ ໃນການພົວພັນລະ ຫວ່າງ ລາວ ແລະ ໄທ, ນຳຄວາມເສຍຫາຍມາ ສູ່ສຳພັນທະໄມຕີ ຖານບ້ານພີ່ນ້ອງນອງລະຫວ່າງ ປະຊາຊົນ ປະເທດທັງສອງ, ລະເມີດຢ່າງ ຮ້າຍ ແຮງ ຖະແຫລງການຮ່ວມ ລາວ ແລະ ໄທ ປີ 1979.

4- ໃນ 2 ເດືອນກວ່າທີ່ຜ່ານມາ, ພວກປະ ຕິການຂວາຈັດໄທ ໄດ້ກໍ່ໂທດກຳອັນມາກຫລາຍ ຕໍ່ ປະຊາຊົນໃນບໍລິເວນສາມໝູ່ບ້ານ.

- ຫລັງຈາກໂຈມຕີບຸກຍຶດເອົາສາມໝູ່ບ້ານຂອງລາວແລ້ວ, ພວກປະຕິການຂວາຈັດໄທ ໄດ້ຮີບຮ້ອນດຳເນີນມາດຕະການຕ່າງໆ ອັນແນໃສ່ເຮັດໃຫ້ການບຸກຍຶດ ເປັນອັນຖືກກົດໝາຍຄື: ລົບລ້າງອຳນາດການປົກຄອງຂອງລາວ, ຕັ້ງອຳນາດການປົກຄອງຂອງໄທຂຶ້ນ; ດຳເນີນການຈົດທະບຽນສຳມະໂນຄົວ ແລະ ອອກບັດປະຈຳຕົວໃຫ້ປະຊາຊົນ, ບັງຄັບປະຊາຊົນຕ້ອງຮຽນໜັງສືໄທ, ຫ້າມຮຽນໜັງສືລາວ, ບັງຄັບໃຫ້ໃຊ້ເງິນ ບາດ, ຫ້າມໃຊ້ເງິນກີບ. ນັບແຕ່ວັນທີ 1 ເຖິງວັນທີ 15 ກໍລະກົດ 1984, ຕາມຈຳນວນຕົວເລກທີ່ຍັງບໍ່ທັນຄົບຖ້ວນ, ເຂົາໄດ້ບັງຄັບເອົາປະຊາຊົນໃນ ສາມໝູ່ບ້ານນີ້ໄປໄທ 438 ຄົນ, ເຂົາຍັງໄດ້ທຳລາຍເຮືອນຊານບ້ານຊ່ອງ, ຕັດກົກໄມ້, ປຸ້ນສະດົມເອົາງົວ ຄວາຍ ຂອງປະຊາຊົນໃນສາມໝູ່ບ້ານ.

- ຫວ່າງແລ້ວນີ້ ເຂົາໄດ້ເສີມກຳລັງທະຫານເຂົ້າໃນບໍລິເວນສາມໝູ່ບ້ານຕື່ມອີກ, ສ້າງ ປ້ອມທະຫານຂຶ້ນຫລາຍຈຸດ, ປັບປຸງຊຸມຄອງສູ້ຮົບ, ນຳ

ເອົາລົດຕັງເຂົ້າມາໃນບໍລິເວນນີ້, ສົ່ງຍົນບັບ ທະຍົນສູ້ຮົບລ່ວງລ້ຳເຂົ້າເຂດນ່ານຟ້າຂອງລາວຫລາຍຄັ້ງ, ມີບາງບ່ອນເຂົ້າເລິກເຖິງ 30 ກິໂລແມັດ, ທະຫານໄທໄດ້ໃຊ້ປືນໃຫຍ່ຫລາຍຊະນິດຍິງຖະຫລົ່ມເປັນຈຳນວນຫລາຍໆລູກເຂົ້າໃນເຂດອ້ອມແອ້ມ 3 ຫມູ່ບ້ານ. ໄລສະເພາະແຕ່ວັນທີ 12 ຫາ 14/7 ປີ 1984, ທະຫານໄທໄດ້ຍິງປືນໃຫຍ່ ຂະຫນາດ 75 ມມ, 105 ມມ, 155 ມມ ເຂົ້າໃນ ບໍລິເວນນີ້ 635 ລູກ ແລະ ລູກປືນຄົກນັບເປັນ ພັນໆ ລູກ.

ເຂົາໄດ້ກຳນົດວ່າ ໃຫ້ປະຊາຊົນອອກຈາກບ້ານແຕ່ 7 ໂມງເຊົ້າຫາ 5 ໂມງແລງແລະ ແຕ່ລະຄອບຄົວໃຫ້ອອກຈາກບ້ານໄປໄດ້ແຕ່ຄົນ ດຽວເທົ່ານັ້ນ ເຂົາບັງຄັບປະຊາຊົນໂຮມຊຸມນຸມ ມິດຕິງໂດຍສະແດງລະຄອນໃຫ້ນາຍບ້ານທີ່ເປັນລູກມືຂອງເຂົາຂຶ້ນອອກຄຳເຫັນຮຽກຮ້ອງໃຫ້ລັດຖະບານໄທບໍ່ຖອນທະຫານອອກຈາກສາມບ້ານ ແລະ ບໍ່ສົ່ງສາມບ້ານຄືນໃຫ້ລັດຖະບານລາວ. ທະຫານໄທ ໄດ້ທຳ

ການຂົ່ມຂືນທຳສຳເລົາແມ່ຍິງ, ມີທະຫານໄທສອງຄົນໄດ້ໃຊ້ປືນຈີ້ຂູ່ຜູ້ເປັນພໍ່ແລ້ວ ພວກເຂົາພັດ ປ່ຽນກັນທຳສຳເລົາລູກສາວຂອງເພິ່ນ ເຊິ່ງເກີດຂຶ້ນ ທີ່ບ້ານໃໝ່. ບັງຄັບໃຫ້ປະຊາຊົນຕ້ອງໃຊ້ແທນ ຄ່າໝາກມິ່ນ ທີ່ພວກເຂົາຫ້າງໄວ້ຢ່າງຊະຊາຍ ຢູ່ທຸກບ່ອນໃນເມື່ອງົວ, ຄວາຍຂອງປະຊາຊົນໄປ ປ່ຽບຖືກແຕກກາງເວັນແມ່ນ 700 ບາດ, ກາງຄືນແມ່ນ 1.000 ບາດ.

ປະຊາຊົນ ແລະ ລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວ ກ່າວປະນາມ ຢ່າງແຂງແຮງການກະທຳອັນເປັນໂທດກຳຂອງພວກປະຕິການຂວາຈັດໄທຕໍ່ທາງສຽງຢູ່ໃນປະເທດໄທແລະຕໍ່ທາງສຽງອັນເປັນທຳໃນໂລກ ແລະ ທວງ ໃຫ້ເຂົາຕ້ອງຖອນທະຫານໄທອອກຈາກດິນລາວ ທັງໝົດຢ່າງບໍ່ມີເງື່ອນໄຂ, ຕ້ອງສົ່ງປະຊາຊົນ ທີ່ຖືກເຂົາບິບບັງຄັບໄປບັ້ນໃຫ້ກັບມາບ້ານຂອງຕົນ, ຕ້ອງໃຊ້ຄ່າເສຍຫາຍດ້ານຊີວິດ ແລະ ຊັບສິນໃຫ້ແກ່ປະຊາຊົນສາມໝູ່ບ້ານ ໂດຍບໍ່ໃຫ້ໃຊ້ເລກິນໃດໆ ມາ

ຫລີບຫລິກໄດ້.

# ພາກທີ III

ພາຍຫລັງການສູ້ຮົບຢ່າງພິລະອາດຫານ ຕ້ານພວກຈັກກະພັດລ່າເມືອງຂຶ້ນຜູ້ຮຸກຮານ ເພື່ອເອກະລາດ, ອິດສະຫລະພາບ, ປະຊາຊົນລາວທຸກເຜົ່າຊົນບໍ່ມີຄວາມມຸ່ງມາດປາຖະໜາໃດອື່ນທີ່ ນອກເໜືອໄປກວ່າຢາກດຳລົງຊີວິດຢູ່ໃນສັນຕິພາບ , ສ້າງສາປະເທດຊາດຄືນໃໝ່, ສ້າງຊີວິດໃໝ່ , ເພາະສະນັ້ນ, ສາທາລະນະລັດ ປະຊາທິປະ ໄຕປະຊາຊົນລາວ ຍາມໃດກໍ່ປະສົງ ແລະ ສູ້ຊົນປະຕິບັດນະໂຍບາຍທີ່ມີລັກສະນະຫລັກການຂອງຕົນ ຄື: ເສີມສ້າງ ແລະ ຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບບັນດາປະເທດບ້ານໃກ້ເຮືອນຄຽງກໍດີກັບທຸກໆປະເທດ.

ໂດຍສະເພາະຕໍ່ລາຊະອານາຈັກໄທ ເຊິ່ງເປັນປະເທດບ້ານໃກ້ເຮືອນຄຽງ ທີ່ມີຊາຍແດນຮ່ວມກັນຍາວເຖິງ 1.650 ກວ່າກິໂລແມັດ, ປະຊາຊົນສອງຊາດ ລາວ-ໄທ ໄດ້ມີສາຍສຳພັນ ທະໄມຕີຖານບ້ານພີ່ເມືອງນ້ອງນຳກັນມາແຕ່ບູຮານນະການມົນ, ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຍາມໃດກໍໄດ້ເຮັດສຸດຄວາມສາມາດຂອງຕົນ ເພື່ອຮັກສາ ແລະ ຂະຫຍາຍສາຍພົວພັນ ດັ່ງກ່າວນັ້ນ ບົນຈິດໃຈດັ່ງກ່າວ, ນາຍົກລັດຖະ ມົນຕີແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວຈຶ່ງໄດ້ພ້ອມກັບນາຍົກລັດຖະມົນຕີແຫ່ງລາຊະອານາຈັກໄທເຊັນຖະແຫລງການຮ່ວມສອງສະບັບ ເມື່ອເດືອນ ມັງກອນ ແລະ ເດືອນ ເມສາ ປີ 1979 ຢືນຢັນ 5 ຫລັກການອັນເປັນພື້ນຖານໃຫ້ແກ່ ການພົວພັນລະຫວ່າງສອງປະເທດຄື:

- ເຄົາລົບເອກະລາດ, ອະທິປະໄຕແລະພື້ນແຜ່ນດິນອັນຄົບຖ້ວນຂອງກັນ ແລະກັນ.
- ເຄົາລົບສິດທິຂອງແຕ່ລະປະເທດທີ່ຈະດຳລົງ

ດຳລົງຢູ່ໂດຍປາສະຈາກການແຊກແຊງ ແລະ ການຂົ່ມຂູ່ຈາກພາຍນອກ.

- ບໍ່ແຊກແຊງວຽກງານພາຍໃນຂອງກັນແລະກັນ ພ້ອມທັງລະເວັ້ນການດຳເນີນການກໍ່ກວນທຳລາຍ ຕໍ່ກັນບໍ່ວ່າຈະໂດຍທາງກົງ ຫລື ທາງອ້ອມ.

- ແກ້ໄຂຂໍ້ຂັດແຍ້ງໂດຍສັນຕິວິທີຕາມກົດ ບັດສະຫະປະຊາຊາດ ບົນພື້ນຖານແຫ່ງຄວາມສະເໝີພາບ.

- ຫລີກເວັ້ນການຂົ່ມຂູ່ ຫລືໃຊ້ກຳລັງ ຕໍ່ກັນ ແລະ ບໍ່ອະນຸຍາດໃຫ້ຜູ້ອື່ນໃຊ້ດິນແດນຂອງຕົນເປັນຖານທັບ ເພື່ອແຊກແຊງຂົ່ມຂູ່ ຫລືຮຸກຮານປະເທດອື່ນ ບໍ່ວ່າໃນຮູບການໃດໆ, ລວມທັງການປະຕິບັດຕາມຄຳໝັ້ນທີ່ໃຫ້ຕໍ່ກັນວ່າ ແຕ່ລະຝ່າຍຈະບໍ່ ຍອມໃຫ້ມີການໃຊ້ດິນແດນຂອງຕົນເປັນຖານທີ່ຈະ ເພື່ອແຊກແຊງຂົ່ມຂູ່ຮຸກຮານຫລືເພື່ອກໍ່ກວນທຳລາຍ ອີກຝ່າຍໜຶ່ງ ບໍ່ວ່າໃນຮູບການໃດ.

ຖະແຫລງການຮ່ວມເດືອນ ເມສາ ປີ 1979 ຍັງໄດ້ບົ່ງໄວ້ຢ່າງຈັດແຈ້ງວ່າ:

"ນາຍົກລັດຖະມົນຕີທັງສອງໄດ້ຕົກລົງນຳກັນ
ວ່າ ຈະເຮັດໃຫ້ຊາຍແດນ ລາວ-ໄທ ທັງໝົດ
(ທັງສ່ວນແມ່ນ້ຳຂອງ ແລະ ທາງບົກ) ເປັນຊາຍ
ແດນແຫ່ງສັນຕິພາບ ແລະ ມິດຕະພາບ ບົນ ຫລັກ
ການການເຄົາລົບເອກະລາດ, ອະທິປະໄຕ ແລະ
ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ການເຄົາລົບນັບ
ຖືສິດປະໂຫຍດອັນຊອບທຳຂອງກັນ, ການ ແກ້ໄຂ
ຂໍ້ພິພາດລະຫວ່າງປະເທດທັງສອງໂດຍສັນຕິວິທີ .
ໃນເລື່ອງນີ້, ບັນດາພາກສ່ວນທີ່ກ່ຽວຂ້ອງຂອງ 2
ປະເທດຈະພ້ອມກັນຕົກລົງວ່າດ້ວຍຂໍ້ກຳນົດແລະລະ
ບຽບການ ກ່ຽວກັບບັນດາປະຕູດ່ານຊາຍແດນ ລະ
ຫວ່າງສອງປະເທດ, ການໄປມາຫາສູ່ກັນ ລະ
ຫວ່າງປະຊາຊົນສອງເບື້ອງຂອງຊາຍແດນ ລາວ-
ໄທ ແລະ ກຳນົດວິທີການອັນຈຳເປັນທີ່ມີຜົນ ສັກ
ສິດ ເພື່ອສະກັດກັ້ນ ແລະ ທັບມ້າງທຸກການເຄື່ອນ
ໄຫວໃດໆຂອງຜູ້ກໍ່ການຮ້າຍທີ່ສວຍໃຊ້ເຂດຊາຍ
ແດນເປັນບ່ອນລີ້ຊ່ອນ ໄປປະຕິບັດການຮົບກວນທຳ
ລາຍຄວາມສະຫງົບສຸກຂອງປະຊາຊົນ ທັງ ສອງ

ເບື້ອງຊາຍແດນ, ຈະພະຍາຍາມອົບຮົມສຶກສາໃຫ້ປະຊາຊົນ, ທະຫານຕຳຫລວດ ແລະ ເຈົ້າຫນ້າທີ່ຂອງລັດໃນທຸກຂະແຫນງການ ເປັນຕົ້ນຜູ້ທີ່ດຳເນີນງານຢູ່ເຂດຊາຍແດນໃຫ້ຊາບຊຶ້ງເຖິງຈຸດໃຈ ແຫ່ງການເສີມສ້າງມິດຕະພາບ ລາວ-ໄທ ແລະ ໃຫ້ມີການປະຕິບັດລະບຽບການທີ່ໄດ້ກຳນົດໄວ້ຢ່າງ ຖືກຕ້ອງ".

ສຳລັບຝ່າຍຕົນ ສາທາລະນະລັດປະຊາທິ ປະໄຕປະຊາຊົນລາວ ໄດ້ເຄົາລົບນັບຖື ບັນດາ ຫລັກການດັ່ງກ່າວນັ້ນຢ່າງເຂັ້ມງວດ ແລະ ເຮັດ ສຸດຄວາມສາມາດຂອງຕົນ ເພື່ອເຮັດໃຫ້ຊາຍ ແດນລາວ-ໄທ ກາຍເປັນຊາຍແດນແຫ່ງສັນຕິພາບແລະມິດຕະພາບ. ແຕ່ກົງກັນຂ້າມ ຝ່າຍໄທ ຊ້ຳພັດ ບໍ່ໄດ້ປະຕິບັດຢ່າງຖືກຕ້ອງດັ່ງດຽວກັນ. ດ້ວຍການສົ່ງທະຫານມາບຸກໂຈມຕີ ບຽດຍຶດສາມຫມູ່ບ້ານຂອງລາວ, ພວກປະຕິການຂວາຈັດໃນວົງການກຳອຳນາດໄທ ໄດ້ລະເມີດຢ່າງຮ້າຍແຮງຕໍ່ບັນດາ ຂໍ້ຄວາມທີ່ລັດຖະບານລາຊະອານາຈັກໄທໄດ້ໃຫ້ ຄຳ

ໝັ້ນສັນຍາໃນຖະແຫລງການຮ່ວມສອງສະບັບ ດັ່ງກ່າວນັ້ນ, ລວງລ້ຳອຳນາດອະທິປະໄຕ ແລະ ພື້ນແຜ່ນດິນອັນຄົບຖ້ວນຂອງລາວ. ຝືນຕໍ່ຜົນປະໂຫຍດ ແລະ ຄວາມມຸ່ງມາດປາຖະໜາຂອງປະຊາຊົນ 2 ປະເທດ ທີ່ມີຄວາມປະສົງຢາກດຳລົງຄົງຢູ່ໂດຍສັນຕິ ແລະ ຂະຫຍາຍສາຍພົວພັນມິດຕະພາບນຳກັນ, ຢຽບຢ່ຳບັນດາຫລັກການ ແລະ ປະເພນີສາກົນໃນການພົວພັນລະຫວ່າງຊາດຢ່າງບັງອາດ, ຝືນຕໍ່ຈິດໃຈຂອງກົດບັດສະຫະປະຊາຊາດ.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຫວງຢ່າງເດັດດ່ຽວໃຫ້ຝ່າຍໄທຕ້ອງຖອນກອງ ທະຫານ, ເຈົ້າໜ້າທີ່ຝ່າຍທະຫານ ແລະ ພົນ ລະເຮືອນຂອງເຂົາອອກຈາກບ່ອນທີ່ພວກເຂົາບຸກຍຶດນັ້ນໃຫ້ໝົດຢ່າງບໍ່ມີເງື່ອນໄຂ, ຕ້ອງສົ່ງປະຊາຊົນທີ່ຖືກພວກເຂົາຈັບໄປນັ້ນກັບຄືນບ້ານເດີມ, ຕ້ອງໃຊ້ແທນຄ່າເສຍຫາຍດ້ານຊີວິດ ແລະ ຊັບສິນຂອງປະຊາຊົນທ້ອງຖິ່ນທີ່ພວກເຂົາກໍ່ຂຶ້ນ, ເຮັດໃຫ້ ສະພາບການຢູ່ສາມໝູ່ບ້ານກັບສູ່ຄວາມເປັນປົກ ກະຕິ

ລີກອນນີ້ທະຫານໄທບຽດຢຶດ ວັນທີ 6 ມິຖຸນາ ປີ 1984.

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຍາມໃດກໍມີແຜນນະໂຍບາຍແກ້ໄຂບັນຫາຕ່າງໆໃນການພົວພັນລະຫວ່າງປະເທດທັງສອງ ດ້ວຍ ການເຈລະຈາ ບົນພື້ນຖານບັນດາຫລັກການທີ່ໄດ້ກຳນົດໄວ້ໃນຖະແຫລງການຮ່ວມສອງສະບັບ ເມື່ອປີ 1979. ແຕ່ກໍເດັດດ່ຽວໃຊ້ສິດປ້ອງກັນຕົວອັນຊອບທຳ ເພື່ອປົກປັກຮັກສາ ເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຕົນ.

ປະຊາຊົນ ແລະ ລັດຖະບານ ສາທາ ລະນະລັດປະຊາທິປະໄຕປະຊາຊົນລາວ ຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ແລະ ຂໍຮຽກຮ້ອງຢ່າງແຮງກ້າ ມາຍັງປະຊາຊົນໄທ ແລະຜູ້ທີ່ມີເຈດຕະນາດີຢູ່ໄທ, ຕໍ່ປະຊາຊົນ ແລະ ລັດຖະບານບັນດາປະເທດອ້າຍນ້ອງ ແລະ ເພື່ອນມິດທັງຫລາຍທີ່ໄດ້ໃຫ້ການສະໜັບສະໜູນຫລັກໝັ້ນອັນເປັນ ທຳຂອງລາວ, ເດັດດ່ຽວທວງໃຫ້ຝ່າຍໄທຕ້ອງ ຕອບ

ສະຫນອງ ບັນດາຂໍ້ເລັ່ງທວງທີ່ສົມເຫດສົມຜົນຂອງ ລາວ, ຕ້ອງເຄົາລົບເອກະລາດ, ອະທິປະໄຕແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ.

ວຽງຈັນ, ວັນທີ 17 ສິງຫາ 1984.

กองทัพภาค3 เปิดยุทธการสายฟ้าแลบ
บุกยึด 3 หมู่บ้าน
ลาวแดงหนีเตลิด

ไทยรัฐ



อาวุธลาวแดง
อาวุธปืน-กระสุนและระเบิดของทหาร
ลาวแดงที่ทหารกองทัพภาค3ยึดได้ หลังหนี
กระเจิงออกจาก 3หมู่บ้านชายแดน อุตรดิตถ์

ຫລັກໝາຍເຂດແດນ ( ລາວ-ໄທ ) ທີ່ພວກປະຕິການຂວາຈັດໃນກອງທັບໄທ
ສັ່ງໃຫ້ລັກເອົາອອກ ພາຍຫລັງທີ່ພວກເຂົານຳກອງທະຫານໄທບຸກຮຸກຮານບຸກຍຶດ
3 ໝູ່ບ້ານຂອງລາວ ( ບ້ານໃໝ່, ບ້ານກາງແລະ ບ້ານສະຫວ່າງ )
ໃນວັນທີ 6/6/84. ( ຫລັກໝາຍເຂດແດນເຮັດດ້ວຍໄມ້ )

# PAK-LAY

CARTE ANNEXEE AU TRAITE
FRANCO-SIAMOIS DU 23.3.1907

Echelle : 1:200.000

## COMMISSION DE DÉLIMITATION ENTRE L'INDO-CHINE ET LE SIAM

*H. BARRERE, Ed. Géographe, 21. Rue du Bac PARIS.*

98°40' 99°




98°40' 99°

ພິມທີ່ ໂຮງພິມແຫ່ງລັດ